(ໂຄງຮ່າງ)

# ກົດໝາຍ
# ວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ


**ພາກທີ I ບົດບັນຍັດທົ່ວໄປ**

**ພາກທີ II ຂອບເຂດການຊົດເຊີຍ, ຜູ້ຮ້ອງຂໍການຊົດເຊີຍ ແລະ ອົງການຊົດເຊີຍຄ່າເສຍຫາຍ**

ໝວດທີ 1 ຂອບເຂດການຊົດເຊີຍຄ່າເສຍຫາຍຈາກລັດ

ໝວດທີ 2 ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ

ໝວດທີ 3 ອົງການຊົດເຊີຍຄ່າເສຍຫາຍ

**ພາກທີ III ການແກ້ໄຂການຊົດເຊີຍຄ່າເສຍຫາຍ**

ໝວດທີ 1 ຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍ

ໝວດທີ 2 ການແກ້ໄຂການຊົດເຊີຍຄ່າເສຍຫາຍ ຢູ່ສານປະຊາຊົນ

**ພາກທີ IV ງົບປະມານຊົດເຊີຍຄ່າເສຍຫາຍ**

**ພາກທີ V ການຊຳລະເງິນຄືນ**

**ພາກທີ VI ຂໍ້ຫ້າມ**

**ພາກທີ VII ການກວດກາວຽກງານຊົດເຊີຍຄ່າເສຍຫາຍ**

**ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ພາກທີ IX ບົດບັນຍັດສຸດທ້າຍ**

(ໂຄງປະກອບ)

# ຮ່າງ
# ກົດໝາຍ
# ວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ

## ພາກທີ I ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ
ມາດຕາ 2 ການຊົດເຊີຍຄ່າເສຍຫາຍຈາກລັດ
ມາດຕາ 3 ການອະທິບາຍຄໍາສັບ
ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການຊົດເຊີຍຄ່າເສຍຫາຍຈາກລັດ
ມາດຕາ 5 ຫຼັກການກ່ຽວກັບວຽກງານຊົດເຊີຍຄ່າເສຍຫາຍຈາກລັດ
ມາດຕາ 6 ຂອບເຂດການນໍາໃຊ້ກົດໝາຍ
ມາດຕາ 7 ການຮ່ວມມືສາກົນ

## ພາກທີ II ຂອບເຂດການຊົດເຊີຍ, ຜູ້ຮ້ອງຂໍການຊົດເຊີຍ ແລະ ອົງການຊົດເຊີຍຄ່າເສຍຫາຍ

### ໝວດທີ 1 ຂອບເຂດການຊົດເຊີຍຄ່າເສຍຫາຍຈາກລັດ

ມາດຕາ 8 ການຊົດເຊີຍຄ່າເສຍຫາຍຈາກລັດ
ມາດຕາ 9 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການຄຸ້ມຄອງບໍລິຫານລັດ
ມາດຕາ 10 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການດໍາເນີນຄະດີອາຍາ
ມາດຕາ 11 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການດໍາເນີນຄະດີແພ່ງ
ມາດຕາ 12 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການຈັດຕັ້ງປະຕິບັດຄໍາຕົກລົງຂອງສານ ທາງອາຍາ
ມາດຕາ 13 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ທາງແພ່ງ
ມາດຕາ 14 ການປະຕິເສດການຊົດເຊີຍຄ່າເສຍຫາຍ

### ໝວດທີ 2 ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ

ມາດຕາ 15 ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ
ມາດຕາ 16 ສິດ ແລະ ພັນທະຂອງຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ

### ໝວດທີ 3 ອົງການຊົດເຊີຍຄ່າເສຍຫາຍ

ມາດຕາ 17 ອົງການຊົດເຊີຍຄ່າເສຍຫາຍ
ມາດຕາ 18 ຄວາມຮັບຜິດຊອບຂອງອົງການຊົດເຊີຍຄ່າເສຍຫາຍ
ມາດຕາ 19 ສິດ ແລະ ພັນທະຂອງຜູ້ປະຕິບັດໜ້າທີ່ ທີ່ລະເມີດກົດໝາຍ

## ພາກທີ III ການແກ້ໄຂການຊົດເຊີຍຄ່າເສຍຫາຍ

### ໝວດທີ 1 ຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍ

ມາດຕາ 20 ການຮ້ອງຂໍການຊົດເຊີຍຄ່າເສຍຫາຍ

ມາດຕາ 21 ເອກະສານປະກອບການຮ້ອງຂໍການຊົດເຊີຍຄ່າເສຍຫາຍ
ມາດຕາ 22 ການພິຈາລະນາການຮ້ອງຂໍການຊົດເຊີຍຄ່າເສຍຫາຍ
ມາດຕາ 23 ການກວດກາຢັ້ງຢືນຄວາມເສຍຫາຍ
ມາດຕາ 24 ການເຈລະຈາການຊົດເຊີຍຄ່າເສຍຫາຍ
ມາດຕາ 25 ການຕົກລົງການຊົດເຊີຍຄ່າເສຍຫາຍ
ມາດຕາ 26 ການລົບລ້າງ, ການປ່ຽນແປງ ແລະ ປັບປຸງການຕົກລົງການຊົດເຊີຍຄ່າເສຍຫາຍ
ມາດຕາ 27 ການເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ
ມາດຕາ 28 ການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ
ມາດຕາ 29 ການຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ
ມາດຕາ 30 ການສະເໜີໃນກໍລະນີບໍ່ພໍໃຈຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍ

**ໝວດທີ 2 ການແກ້ໄຂການຊົດເຊີຍຄ່າເສຍຫາຍ ຢູ່ສານປະຊາຊົນ**

ມາດຕາ 31 ການຮ້ອງຟ້ອງຕໍ່ສານ
ມາດຕາ 32 ສານປະຊາຊົນທີ່ມີສິດພິຈາລະນາຕັດສິນກ່ຽວກັບການຊົດເຊີຍຄ່າເສຍຫາຍ
ມາດຕາ 33 ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ

## ພາກທີ IV ງົບປະມານການຊົດເຊີຍຄ່າເສຍຫາຍ

ມາດຕາ 34 ງົບປະມານ
ມາດຕາ 35 ການຂຶ້ນແຜນຄາດຄະເນງົບປະມານ
ມາດຕາ 36 ການຄຸ້ມຄອງ ແລະ ນໍາໃຊ້ງົບປະມານ

## ພາກທີ V ການຊໍາລະເງິນຄືນ

ມາດຕາ 37 ພັນທະໃນການຊໍາລະເງິນຄືນ
ມາດຕາ 38 ພື້ນຖານການກໍານົດມູນຄ່າການຊໍາລະເງິນຄືນ
ມາດຕາ 39 ການຕົກລົງກ່ຽວກັບການຊໍາລະເງິນຄືນ
ມາດຕາ 40 ການສະເໜີ ຫຼື ຮ້ອງຟ້ອງຕໍ່ສານ ກ່ຽວກັບການຕົກລົງການຊໍາລະເງິນຄືນ

## ພາກທີ VI ຂໍ້ຫ້າມ

ມາດຕາ 41 ຂໍ້ຫ້າມທົ່ວໄປ
ມາດຕາ 42 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

## ພາກທີ VII ການກວດກາວຽກງານຊົດເຊີຍຄ່າເສຍຫາຍ

ມາດຕາ 43 ອົງການກວດກາວຽກງານຊົດເຊີຍຄ່າເສຍຫາຍ
ມາດຕາ 44 ເນື້ອໃນການກວດກາ
ມາດຕາ 45 ຮູບການການກວດກາ

## ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 46 ນະໂຍບາຍຕໍ່ຜູ້ມີຜົນງານ
ມາດຕາ 47 ມາດຕະການຕໍ່ຜູ້ລະເມີດ

**ພາກທີ IX ບົດບັນຍັດສຸດທ້າຍ**
ມາດຕາ 48 ການຈັດຕັ້ງປະຕິບັດ
ມາດຕາ 49 ຜົນສັກສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫຼວງວຽງຈັນ, ວັນທີ

(ຮ່າງ)

# ກົດໝາຍ
# ວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຊົດເຊີຍຄ່າເສຍຫາຍຈາກລັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ, ຍຸຕິທຳ ແລະ ຮັບປະກັນໃຫ້ຜູ້ຖືກເສຍຫາຍ ໄດ້ຮັບການຊົດເຊີຍຄ່າເສຍຫາຍຈາກລັດ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແລະ ການຈັດຕັ້ງ, ປົກປ້ອງຜົນປະໂຫຍດຂອງລັດ, ຍົກສູງຄວາມຮັບຜິດຊອບຂອງພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ໃນການປະຕິບັດໜ້າທີ່ຂອງຕົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຊົດເຊີຍຄ່າເສຍຫາຍຈາກລັດ**

ການຊົດເຊີຍຄ່າເສຍຫາຍຈາກລັດ ແມ່ນ ການທົດແທນຄວາມເສຍຫາຍທາງດ້ານວັດຖຸ ຫຼື ການຟື້ນຟູຄວາມເສຍຫາຍທາງດ້ານຈິດໃຈ ໃຫ້ແກ່ຜູ້ຖືກເສຍຫາຍ ໂດຍລັດ ຍ້ອນການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ປະຕິບັດໜ້າທີ່** ໝາຍເຖິງ ບຸກຄົນ ທີ່ຖືກເລືອກຕັ້ງ, ຮັບຮອງ, ບັນຈຸ ຫຼື ແຕ່ງຕັ້ງເຂົ້າໃນຕຳແໜ່ງໃດໜຶ່ງ ໃນອົງການຈັດຕັ້ງຂອງລັດ ຫຼື ບຸກຄົນໃດໜຶ່ງ ທີ່ຖືກມອບໝາຍຈາກອົງການຈັດຕັ້ງລັດທີ່ມີສິດອຳນາດ ເພື່ອນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ໃນການຄຸ້ມຄອງບໍລິຫານລັດ ຫຼື ການດຳເນີນຄະດີ ຫຼື ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
2. **ການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່** ໝາຍເຖິງ ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ໂດຍບໍ່ຖືກຕ້ອງ ຫຼື ການບໍ່ນຳໃຊ້ສິດ ແລະ ບໍ່ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. **ຜູ້ຖືກເສຍຫາຍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຄວາມເສຍຫາຍທາງດ້ານວັດຖຸ ແລະ/ຫຼື ຈິດໃຈ ທີ່ເກີດຈາກການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງຜູ້ປະຕິບັດໜ້າທີ່;
4. **ຄວາມເສຍຫາຍທາງດ້ານວັດຖຸ** ໝາຍເຖິງ ຄວາມເສຍຫາຍທາງດ້ານຊັບສິນ ຊຶ່ງປະກອບດ້ວຍ ຄວາມເສຍຫາຍທີ່ເປັນລາຍຮັບແທ້ຈິງທີ່ສູນເສຍ ຫຼື ຫຼຸດລົງ, ຄວາມເສຍຫາຍທີ່ເກີດຈາກຄ່າໃຊ້ຈ່າຍໃນການປິ່ນປົວ, ການສົ່ງເສີມສຸຂະພາບ, ຄ່າໃຊ້ຈ່າຍສຳລັບຜູ້ເບິ່ງແຍງຜູ້ຖືກເຄາະຮ້າຍ, ຄ່າຊາປານະກິດສົບ, ເງິນບຳນານຂອງຜູ້ຖືກເຄາະຮ້າຍກ່ອນເສຍຊີວິດ, ຄ່າໃຊ້ຈ່າຍໃນການເດີນທາງ, ຄ່າພັກເຊົາຂອງຜູ້ມາຢ້ຽມຢາມຜູ້ຖືກຫາ ຫຼື ນັກໂທດ, ຄ່າທຳນຽມ, ຄ່າພິມເອກະສານ, ຄ່າສິ່ງຈົດໝາຍ ໂດຍຄິດໄລ່ເປັນມູນຄ່າຄວາມເສຍຫາຍຕົວຈິງ ເພື່ອຊົດເຊີຍໃຫ້ແກ່ຜູ້ຖືກເສຍຫາຍ;
5. **ຄວາມເສຍຫາຍທາງດ້ານຈິດໃຈ** ໝາຍເຖິງ ຄວາມເສຍຫາຍທີ່ເກີດຈາກ ການປະຕິບັດມາດຕະການທາງດ້ານບໍລິຫານ ຊຶ່ງແຕະຕ້ອງທາງດ້ານຈິດໃຈຂອງບຸກຄົນ, ການຖືກກັກຂັງຊົ່ວຄາວຕາມຂັ້ນຕອນການບໍລິຫານ, ຜູ້ຖືກເຄາະຮ້າຍ ຖືກດຳເນີນຄະດີ, ເສຍຊີວິດ, ຖືກລົງວິໄນ ຫຼື ໃຫ້ອອກການຢ່າງຜິດກົດໝາຍ ຊຶ່ງຕ້ອງໄດ້ຮັບການຟື້ນຟູ;
6. **ການຟື້ນຟູ** ໝາຍເຖິງ ການປົວແປງ ຕຳແໜ່ງ, ໜ້າທີ່ວຽກງານ ແລະ ນະໂຍບາຍອື່ນ ທີ່ຖືກຕ້ອງຕາມກົດໝາຍ, ກຽດສັກສີ, ສິດ ແລະ ຜົນປະໂຫຍດອັນຊອບທຳ, ການຮຽນຮູ້, ວິຊາຊີບ, ການເປັນສະມາຊິກຂອງອົງການຈັດຕັ້ງໃດໜຶ່ງ;
7. **ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ** ໝາຍເຖິງ ອົງການຈັດຕັ້ງປະຕິບັດຄຳຕົກລົງຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
8. **ອົງການສືບສວນ-ສອບສວນ** ໝາຍເຖິງ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ, ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ, ອົງການສືບສວນ-ສອບສວນຂອງພາກສ່ວນອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການຊົດເຊີຍຄ່າເສຍຫາຍຈາກລັດ

ລັດ ຖືສຳຄັນວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ດ້ວຍການ ວາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ສະໜອງງົບປະມານ ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານດັ່ງກ່າວ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບ.

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກເສຍຫາຍ ຈາກການກະທຳທີ່ເປັນການລະເມີດກົດໝາຍຂອງຜູ້ປະຕິບັດໜ້າທີ່.

### ມາດຕາ 5 ຫຼັກການກ່ຽວກັບວຽກງານຊົດເຊີຍຄ່າເສຍຫາຍຈາກລັດ

ວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ;
2. ຮັບປະກັນສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;
3. ສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ ແລະ , ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ຮັບປະກັນຂໍ້ມູນທີ່ເຊື່ອຖືໄດ້, ຊັດເຈນ, ມີລັກສະນະວິທະຍາສາດ, ສາມາດກວດກາ ແລະ ຢັ້ງຢືນໄດ້;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ຢູ່ ສປປ ລາວ.

ສຳລັບການທົດແທນຄ່າເສຍຫາຍຈາກໂຄງການພັດທະນາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ດ້ວຍການແລກປ່ຽນບົດຮຽນ, ປະສົບການ, ຍົກລະດັບທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ.

# ພາກທີ II

# ຂອບເຂດການຊົດເຊີຍ, ຜູ້ຮ້ອງຂໍການຊົດເຊີຍ ແລະ ອົງການຊົດເຊີຍຄ່າເສຍຫາຍ

## ໝວດທີ 1

## ຂອບເຂດການຊົດເຊີຍຄ່າເສຍຫາຍຈາກລັດ

**ມາດຕາ 8 ການຊົດເຊີຍຄ່າເສຍຫາຍຈາກລັດ**

ການຊົດເຊີຍຄ່າເສຍຫາຍຈາກລັດ ມີ ດັ່ງນີ້:

1. ການຊົດເຊີຍຄ່າເສຍຫາຍໃນການຄຸ້ມຄອງບໍລິຫານລັດ;
2. ການຊົດເຊີຍຄ່າເສຍຫາຍໃນການດຳເນີນຄະດີອາຍາ;
3. ການຊົດເຊີຍຄ່າເສຍຫາຍໃນການດຳເນີນຄະດີແພ່ງ;
4. ການຊົດເຊີຍຄ່າເສຍຫາຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງອາຍາ;
5. ການຊົດເຊີຍຄ່າເສຍຫາຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງແພ່ງ.

**ມາດຕາ 9 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການຄຸ້ມຄອງບໍລິຫານລັດ**

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ໃນການຄຸ້ມຄອງບໍລິຫານລັດ ຕາມຂອບເຂດ ດັ່ງນີ້:

1. ການປັບໃໝ;
2. ການອອກ ຫຼື ບໍ່ອອກ, ການໂຈະ ຫຼື ຖອນ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດອື່ນ;

3. ການກຳນົດເພີ່ມ ຫຼື ການເກັບ ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ເກີນອັດຕາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
4. ການກຳນົດເພີ່ມ ຫຼື ການເກັບພາສີ ເກີນອັດຕາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ການເກັບຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ເກີນອັດຕາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
6. ການແກ້ໄຂບັນຫາທີ່ພົວພັນກັບການແຂ່ງຂັນທາງທຸລະກິດ;
7. ການລົງວິໄນໄລ່ອອກ ຕໍ່ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ.

**ມາດຕາ 10 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການດຳເນີນຄະດີອາຍາ**

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ຢູ່ອົງການສືບສວນ-ສອບສວນ ໃນການດຳເນີນຄະດີອາຍາ ຕາມຂອບເຂດ ດັ່ງນີ້:

1. ການພາຕົວ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງ, ການຄຸມຕົວຢູ່ກັບທີ່, ການງົດໜ້າທີ່ ຫຼື ຕຳແໜ່ງ, ການກວດຄົ້ນ, ການຍຶດ ຫຼື ການອາຍັດຊັບ, ການຊັນນະສູດ;
2. ການກັກຂັງເກີນກຳນົດ;
3. ການໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ ຫຼື ທໍລະມານ ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ ໃນເວລາດຳ ເນີນຄະດີ;
4. ການອອກ ຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ໝາຍຮຽກ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊົດມ້ຽນຄະດີອາຍາ;
5. ການແຈ້ງ ຂໍ້ກ່າວຫາ ຕໍ່ຜູ້ຖືກຫາ;
6. ການສະຫຼຸບ ແລະ ປະກອບສຳນວນຄະດີສົ່ງອົງການໄອຍະການປະຊາຊົນ ແຕ່ອົງການດັ່ງກ່າວ ບໍ່ສັ່ງຟ້ອງຄະດີຂຶ້ນສານປະຊາຊົນ ຫຼື ຊົດມ້ຽນຄະດີ ຍ້ອນຜູ້ຖືກຫາ ບໍ່ໄດ້ກະທຳຜິດທາງອາຍາ.

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ຢູ່ອົງການໄອຍະການປະຊາຊົນ ໃນການດຳເນີນຄະດີອາຍາ ຕາມຂອບເຂດ ດັ່ງນີ້:

1. ການທວງສຳນວນຄະດີອາຍາ, ຂອງກາງ, ເອກະສານ ແລະ ຂໍ້ມູນຕ່າງໆ;
2. ການອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ;
3. ການແຈ້ງ ຂໍ້ກ່າວຫາ ຕໍ່ຜູ້ຖືກຫາ;
4. ການອອກ ໝາຍຮຽກ, ຄຳສັ່ງ ພາຕົວ, ກັກຕົວ, ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ປ່ອຍຕົວ, ຄຸມຕົວຢູ່ກັບທີ່, ງົດໜ້າທີ່ ຫຼື ຕຳແໜ່ງ, ກວດຄົ້ນ, ຍຶດຊັບ, ອາຍັດຊັບ, ອອກຄຳສັ່ງໂຈະ ຫຼື ຊົດມ້ຽນຄະດີອາຍາ;
5. ການລົບລ້າງ ຫຼື ບໍ່ລົບລ້າງ ຄຳສັ່ງຂອງອົງການສືບສວນ-ສອບສວນ;
6. ການຕໍ່ກຳນົດເວລາສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງ;
7. ການສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ;
8. ການສະເໜີຮື້ຟື້ນ ຫຼື ບໍ່ຮື້ຟື້ນຄະດີ;
9. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານປະຊາຊົນ ແຕ່ສານປະຊາຊົນ ຕັດສິນ ຫຼື ພິພາກສາວ່າ ຈຳເລີຍ ເປັນຜູ້ບໍລິສຸດ.

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ຢູ່ສານປະຊາຊົນ ໃນການດຳເນີນຄະດີອາຍາ ຕາມຂອບເຂດ ດັ່ງນີ້:

1. ການອອກ ຫຼື ບໍ່ອອກ ຄຳສັ່ງ, ຄຳຊີ້ຂາດກ່ຽວກັບການດຳເນີນຄະດີອາຍາ;
2. ການທວງ ຫຼື ບໍ່ທວງເອົາສຳນວນຄະດີ ທີ່ເຫັນວ່າມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດ;
3. ການຮັບ ຫຼື ບໍ່ຮັບ ຄຳຮ້ອງຂໍອຸທອນ ຫຼື ລົບລ້າງ, ຄຳສະເໜີຄັດຄ້ານ ຫຼື ສະເໜີຮື້ຟື້ນຄະດີ;
4. ການລົງຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນວ່າ ຈຳເລີຍ ເປັນຜູ້ກະທຳຜິດ ແຕ່ສານປະຊາຊົນຂັ້ນອຸທອນ ພິພາກສາວ່າ ຈຳເລີຍ ເປັນຜູ້ບໍລິສຸດ ຫຼື ບໍ່ຢັ້ງຢືນຕາມຄຳຕັດສິນ ຫຼື ສານປະຊາຊົນຂັ້ນອຸທອນ ໄດ້ສົ່ງສຳນວນຄະດີ ໃຫ້ອົງການໄອຍະການປະຊາຊົນ ດຳເນີນການສືບສວນ-ສອບສວນຄືນໃໝ່, ພາຍຫຼັງສືບສວນ-ສອບສວນຄືນໃໝ່ ເຫັນວ່າ ຈຳເລີຍເປັນຜູ້ບໍລິສຸດ ແລ້ວຊັດມ້ຽນຄະດີ;
5. ການລົງຄຳພິພາກສາຂອງສານປະຊາຊົນຂັ້ນອຸທອນວ່າ ຈຳເລີຍ ເປັນຜູ້ກະທຳຜິດ ແຕ່ສານປະຊາຊົນຂັ້ນລົບລ້າງ ພິພາກສາວ່າ ຈຳເລີຍ ເປັນຜູ້ບໍລິສຸດ ຫຼື ສານປະຊາຊົນຂັ້ນລົບລ້າງ ໄດ້ສົ່ງສຳນວນຄະດີ ໃຫ້ອົງການໄອຍະການປະຊາຊົນ ດຳເນີນການສືບສວນ-ສອບສວນຄືນໃໝ່, ພາຍຫຼັງສືບສວນ-ສອບສວນຄືນໃໝ່ ເຫັນວ່າ ຈຳເລີຍເປັນຜູ້ບໍລິສຸດ ແລ້ວຊັດມ້ຽນຄະດີ;
6. ການລົງຄຳຕັດສິນ ຫຼື ຄຳພິພາກສາວ່າ ຈຳເລີຍ ມີຄວາມຜິດ ແລະ ຄຳຕັດສິນ ຫຼື ຄຳພິພາກສານັ້ນ ໃຊ້ໄດ້ຢ່າງເດັດຂາດແລ້ວ ແຕ່ຕໍ່ມາ ໄດ້ມີການຮື້ຟື້ນຄະດີ ແລະ ສານປະຊາຊົນ ໄດ້ພິພາກສາວ່າ ຈຳເລີຍ ເປັນຜູ້ບໍລິສຸດ

### ມາດຕາ 11 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການດຳເນີນຄະດີແພ່ງ

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ໃນການດຳເນີນຄະດີແພ່ງ ຕາມຂອບເຂດ ດັ່ງນີ້:

1. ການນຳໃຊ້ມາດຕະການຮັບປະກັນການຮ້ອງຟ້ອງ;
2. ການນຳໃຊ້ ຫຼື ບໍ່ນຳໃຊ້ມາດຕະການຮີບດ່ວນຊົ່ວຄາວຂອງສານ;
3. ການອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ;
4. ການເພີ່ມ, ປ່ຽນແປງ, ລົບລ້າງ ຫຼື ທຳລາຍ ເອກະສານ, ຫຼັກຖານ ຫຼື ກະທຳອື່ນ ທີ່ພາໃຫ້ມີການຕັດສິນ ຫຼື ພິພາກສາ ຜິດພາດ ຫຼື ບໍ່ຖືກຕ້ອງ;
5. ການເກັບ ແລະ/ຫຼື ນຳໃຊ້ເງິນວາງສານ ແລະ ຄ່າທຳນຽມສານອື່ນ.

### ມາດຕາ 12 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການຈັດຕັ້ງປະຕິບັດຄຳຕົກລົງຂອງສານ ທາງອາຍາ

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ໃນການຈັດຕັ້ງປະຕິບັດຄຳຕົກລົງຂອງສານ ທາງອາຍາ ຕາມຂອບເຂດ ດັ່ງນີ້:

1. ການອອກຄຳສັ່ງ, ຍົກຍ້າຍ ຫຼື ພາຕົວນັກໂທດ ຫຼື ສະເໜີຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕົກລົງຂອງສານ ທາງອາຍາ;
2. ການປະຕິບັດໂທດປະຫານຊີວິດ ຕໍ່ຜູ້ທີ່ບໍ່ຢູ່ໃນເປົ້າໝາຍການປະຕິບັດໂທດປະຫານຊີວິດ;
3. ການກັກຂັງຜູ້ຖືກລົງໂທດຕັດອິດສະລະພາບ ເກີນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນ ຫຼື ຄຳພິພາກສາຂອງສານ;

4. ການລະເວັ້ນການປະຕິບັດໂທດ, ໂຈະ ຫຼື ຜ່ອນໂທດ ຫຼື ປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ ຫຼື ໃຫ້ອະໄພຍະໂທດ ຕໍ່ຜູ້ຖືກລົງໂທດຕັດອິດສະລະພາບ.

**ມາດຕາ 13 ຂອບເຂດການຊົດເຊີຍຄ່າເສຍຫາຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງແພ່ງ**

ລັດ ຊົດເຊີຍຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງແພ່ງ ຕາມຂອບເຂດ ດັ່ງນີ້:

1. ການອອກ ຫຼື ບໍ່ອອກຄຳສັ່ງ ອາຍັດ, ຍຶດ, ຍົກຍ້າຍ, ໃຫ້ພາຕົວ, ປັບໃໝ ແລະ ຄຳສັ່ງອື່ນກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
2. ການຈັດຕັ້ງປະຕິບັດ ຫຼື ບໍ່ຈັດຕັ້ງປະຕິບັດຄຳສັ່ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

**ມາດຕາ 14 ການປະຕິເສດການຊົດເຊີຍຄ່າເສຍຫາຍ**

ລັດ ບໍ່ຮັບຜິດຊອບຊົດເຊີຍຄ່າເສຍຫາຍ ຊຶ່ງເນື່ອງມາຈາກກໍລະນີໃດໜຶ່ງ ດັ່ງນີ້:

1. ການກະທຳສ່ວນຕົວບຸກຄົນຂອງຜູ້ປະຕິບັດໜ້າທີ່ ຊຶ່ງບໍ່ພົວພັນກັບການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
2. ຄວາມຜິດຂອງຜູ້ຖືກເສຍຫາຍເອງ;
3. ເຫດສຸດວິໄສ ເຖິງວ່າ ຜູ້ປະຕິບັດໜ້າທີ່ ໄດ້ນຳໃຊ້ທຸກມາດຕະການທີ່ຈຳເປັນ ແລະ ຢູ່ໃນຄວາມຮັບຜິດຊອບແລ້ວ;
4. ການປະຕິບັດໜ້າທີ່ ເພື່ອຫຼີກເວັ້ນໄພຂົ່ມຂູ່ໂດຍກົງ ຫຼື ການປະຕິບັດໜ້າທີ່ ເພື່ອເຮັດໃຫ້ການສູນເສຍໜ້ອຍລົງ;
5. ກໍລະນີອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ

**ມາດຕາ 15 ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ**

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຄວາມເສຍຫາຍທາງດ້ານວັດຖຸ ແລະ/ຫຼື ຈິດໃຈ ທີ່ເກີດຈາກການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່.

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ອາດແມ່ນ ຜູ້ຖືກເຄາະຮ້າຍ, ຜູ້ຕາງໜ້າຕາມກົດໝາຍ, ຜູ້ຕາງໜ້າທີ່ຖືກມອບສິດຢ່າງຖືກຕ້ອງຕາມກົດໝາຍຈາກຜູ້ຖືກເຄາະຮ້າຍ, ຜູ້ສືບທອດຂອງຜູ້ຖືກເຄາະຮ້າຍໃນກໍລະນີຜູ້ຖືກເຄາະຮ້າຍເສຍຊີວິດ ຫຼື ການຈັດຕັ້ງທີ່ໄດ້ຮັບສິດ ແລະ ພັນທະຂອງການຈັດຕັ້ງທີ່ຖືກເສຍຫາຍ ໄດ້ສິ້ນສຸດ.

**ມາດຕາ 16 ສິດ ແລະ ພັນທະຂອງຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ**

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ມີ ສິດ ດັ່ງນີ້:

1. ຍື່ນຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ດ້ວຍຕົນເອງ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ ຫຼື ຖອນຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໃນທຸກຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍ;
2. ໄດ້ຮັບການຊົດເຊີຍຄ່າເສຍຫາຍ ແລະ/ຫຼື ຟື້ນຟູ;

3. ໄດ້ຮັບການແນະນຳ ແລະ ຮັບຊາບຜົນການແກ້ໄຂການຊົດເຊີຍຄ່າເສຍຫາຍຢ່າງເປັນລາຍລັກອັກສອນ ຈາກອົງການຊົດເຊີຍຄ່າເສຍຫາຍ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ມີພັນທະ ດັ່ງນີ້:

1. ຊີ້ແຈງ, ອະທິບາຍ ກ່ຽວກັບຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ພ້ອມທັງສະໜອງຂໍ້ມູນຫຼັກຖານ ຕໍ່ອົງການຊົດເຊີຍຄ່າເສຍຫາຍ ຫຼື ສານປະຊາຊົນ;
2. ຮັບຜິດຊອບຕໍ່ເນື້ອໃນຄຳຮ້ອງ, ຂໍ້ມູນຫຼັກຖານ ທີ່ຕົນສະເໜີຕໍ່ອົງການຊົດເຊີຍຄ່າເສຍຫາຍ ຫຼື ສານປະຊາຊົນ;
3. ຮັບຜິດຊອບຕໍ່ຄ່າເສຍຫາຍ ທີ່ເກີດຈາກການຮ້ອງຂໍທີ່ບໍ່ມີມູນຄວາມຈິງ;
4. ປະຕິບັດຕາມການເຊີນ ຫຼື ໝາຍເຊີນຂອງອົງການທີ່ກ່ຽວຂ້ອງ ຕາມກຳນົດເວລາ ແລະ ສະຖານທີ່, ຖ້າບໍ່ປະຕິບັດຕາມການເຊີນ ຫຼື ໝາຍເຊີນ ສາມຄັ້ງຕິດຕໍ່ກັນ ໂດຍບໍ່ມີເຫດຜົນ ຖືວ່າໝົດສິດ;
5. ວາງຕົວໃຫ້ເໝາະສົມ ແລະ ເຄົາລົບກົດລະບຽບຂອງອົງການທີ່ເຊີນ;
6. ປະຕິບັດຕາມການຕົກລົງ ກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ທີ່ມີຜົນສັກສິດທາງດ້ານກົດໝາຍ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ອົງການຊົດເຊີຍຄ່າເສຍຫາຍ

**ມາດຕາ 17 ອົງການຊົດເຊີຍຄ່າເສຍຫາຍ**

ອົງການຊົດເຊີຍຄ່າເສຍຫາຍ ແມ່ນ ອົງການທີ່ຄຸ້ມຄອງຜູ້ປະຕິບັດໜ້າທີ່ໂດຍກົງ ທີ່ລະເມີດກົດໝາຍ ຊຶ່ງພາໃຫ້ເກີດຄວາມເສຍຫາຍ.

ອົງການຊົດເຊີຍຄ່າເສຍຫາຍ ປະກອບດ້ວຍ:

1. ກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ;
2. ອົງການສືບສວນ-ສອບສວນ;
3. ອົງການໄອຍະການປະຊາຊົນ;
4. ສານປະຊາຊົນ;
5. ອົງການຈັດຕັ້ງປະຕິບັດຄຳຕົກລົງຂອງສານ ທາງອາຍາ;
6. ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງແພ່ງ.

**ມາດຕາ 18 ຄວາມຮັບຜິດຊອບຂອງອົງການຊົດເຊີຍຄ່າເສຍຫາຍ**

ອົງການຊົດເຊີຍຄ່າເສຍຫາຍ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງແຜນຄາດຄະເນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ໂດຍອີງຕາມຈຳນວນຕົວຈິງຂອງການຊົດເຊີຍ, ການປະເມີນມູນຄ່າຊັບສິນ, ການປະເມີນຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍອື່ນ ໃນປີຜ່ານມາ;
2. ທົດແທນຄວາມເສຍຫາຍທາງດ້ານວັດຖຸ ແລະ/ຫຼື ຟື້ນຟູຄວາມເສຍຫາຍທາງດ້ານຈິດໃຈ;
3. ສະເໜີອົງການຈັດຕັ້ງທີ່ກ່ຽວຂ້ອງ ແກ້ໄຂການຊົດເຊີຍຄ່າເສຍຫາຍ;
4. ອະທິບາຍກ່ຽວກັບສິດ ແລະ ພັນທະ ໃຫ້ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຫຼື ຜູ້ຖືກເສຍຫາຍຊາບ;
5. ກວດກາຢັ້ງຢືນຄວາມເສຍຫາຍ, ດຳເນີນການເຈລະຈາ ແລະ ປຶກສາຫາລືໃນການແກ້ໄຂການຊົດເຊີຍຄ່າເສຍຫາຍ;
6. ຮັບຜິດຊອບຕໍ່ຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;
7. ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ;
8. ແນະນຳໃຫ້ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໃຫ້ດຳເນີນຕາມຂັ້ນຕອນຂອງການຮ້ອງຂໍ;
9. ເຂົ້າຮ່ວມໃນການດຳເນີນຄະດີຢູ່ສານ ໃນກໍລະນີທີ່ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຮ້ອງຟ້ອງຕໍ່ສານ;
10. ແຈ້ງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ, ຄວາມຮັບຜິດຊອບໃນການຊຳລະເງິນຄືນ ແລະ ການລົງວິໄນຕໍ່ຜູ້ປະຕິບັດໜ້າທີ່ ທີ່ກໍ່ຄວາມເສຍຫາຍ;
11. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 19 ສິດ ແລະ ພັນທະຂອງຜູ້ປະຕິບັດໜ້າທີ່ ທີ່ລະເມີດກົດໝາຍ**

ຜູ້ປະຕິບັດໜ້າທີ່ ທີ່ລະເມີດກົດໝາຍ ມີສິດ ດັ່ງນີ້:

1. ໄດ້ຮັບຊາບກ່ຽວກັບການຮ້ອງຂໍການຊົດເຊີຍຄ່າເສຍຫາຍ ພ້ອມທັງເອກະສານທີ່ກ່ຽວຂ້ອງ;
2. ອະທິບາຍ, ຊີ້ແຈງ ພ້ອມທັງສະເໜີຫຼັກຖານ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ປະຕິບັດໜ້າທີ່ ທີ່ລະເມີດກົດໝາຍ ມີພັນທະ ດັ່ງນີ້:

1. ສະໜອງຂໍ້ມູນຫຼັກຖານ ຕໍ່ອົງການຊົດເຊີຍຄ່າເສຍຫາຍ ຫຼື ສານປະຊາຊົນ;
2. ເຂົ້າຮ່ວມຢ່າງເຕັມສ່ວນໃນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມການເຊີນ ຂອງອົງການຊົດເຊີຍຄ່າເສຍຫາຍ ຫຼື ສານປະຊາຊົນ;
3. ຊຳລະເງິນຄືນ ຕາມການຕົກລົງຂອງອົງການຊົດເຊີຍຄ່າເສຍຫາຍ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ III

# ການແກ້ໄຂການຊົດເຊີຍຄ່າເສຍຫາຍ

## ໝວດທີ 1

## ຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍ

**ມາດຕາ 20 ການຮ້ອງຂໍການຊົດເຊີຍຄ່າເສຍຫາຍ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ຮັບຄວາມເສຍຫາຍ ຍ້ອນການກະທຳທີ່ບໍ່ຖືກຕ້ອງຂອງຜູ້ປະຕິບັດໜ້າທີ່ ມີສິດຮ້ອງຂໍ ຕໍ່ອົງການຊົດເຊີຍຄ່າເສຍຫາຍ ບ່ອນຜູ້ປະຕິບັດໜ້າທີ່ຂຶ້ນກັບ ພາຍໃນກຳນົດເວລາ ສາມປີ ນັບແຕ່ວັນຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໄດ້ຮັບເອກະສານທີ່ເປັນບ່ອນອີງ ເປັນຕົ້ນໄປ.

**ມາດຕາ 21 ເອກະສານປະກອບການຮ້ອງຂໍການຊົດເຊີຍຄ່າເສຍຫາຍ**

ເອກະສານປະກອບຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໃນກໍລະນີຜູ້ຖືກເສຍຫາຍ ຮ້ອງຂໍດ້ວຍຕົນເອງ ມີ ດັ່ງນີ້:

1. ຄຳຮ້ອງ;
2. ເອກະສານທີ່ເປັນພື້ນຖານສຳລັບການຮ້ອງຂໍ;
3. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວຂອງຜູ້ຖືກເສຍຫາຍ, ສຳເນົາໜັງສືຜ່ານແດນ ສຳລັບຄົນຕ່າງປະເທດ;
4. ຫຼັກຖານ ຫຼື ເອກະສານ ທີ່ກ່ຽວຂ້ອງກັບຄວາມເສຍຫາຍ.

ໃນກໍລະນີ ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ເປັນຜູ້ສືບທອດ ຫຼື ເປັນຜູ້ຕາງໜ້າຂອງຜູ້ຖືກເສຍຫາຍ ນອກຈາກ ເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້ແລ້ວ ຍັງຕ້ອງມີເອກະສານ ດັ່ງນີ້:

1. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຂອງຜູ້ສືບທອດ ຫຼື ຜູ້ຕາງໜ້າ, ສຳເນົາໜັງສືຜ່ານແດນ ສຳລັບຄົນຕ່າງປະເທດ;
2. ໃບມອບສິດຂອງຜູ້ຖືກເສຍຫາຍ;
3. ໃບຢັ້ງຢືນການສືບທອດ ໃນກໍລະນີຜູ້ຖືກເສຍຫາຍ ຫາກເສຍຊີວິດ.

ຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ, ເລກໂທລະສັບ ແລະ ທີ່ຢູ່ທາງເອເລັກໂຕຣນິກ ຂອງຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ;
2. ວັນທີ, ເດືອນ, ປີ ການຮ້ອງຂໍ;
3. ການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງຜູ້ປະຕິບັດໜ້າທີ່ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ;
4. ສາຍພົວພັນ ລະຫວ່າງ ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແລະ ຄວາມເສຍຫາຍ;
5. ຄວາມເສຍຫາຍ ແລະ ມູນຄ່າການຮ້ອງຂໍການຊົດເຊີຍຄ່າເສຍຫາຍ;
6. ຄ່າຊົດເຊີຍລ່ວງໜ້າ (ຖ້າມີ);

7. ຄຳສະເໜີໃຫ້ອົງການຊົດເຊີຍຄ່າເສຍຫາຍ ເພື່ອສະໜອງເອກະສານ ທີ່ເປັນພື້ນຖານໃຫ້ແກ່ການຊົດເຊີຍຄ່າເສຍຫາຍ ແຕ່ຕ້ອງກຳນົດແຈ້ງ ກ່ຽວກັບເອກະສານທີ່ຕ້ອງການ ແລະ ສະຖານທີ່ ທີ່ສາມາດສະໜອງເອກະສານດັ່ງກ່າວ ໃນກໍລະນີທີ່ຜູ້ຮ້ອງຂໍ ບໍ່ສາມາດປະກອບດ້ວຍຕົນເອງໄດ້;
8. ຮ້ອງຂໍໃຫ້ມີການຟື້ນຟູ (ຖ້າມີ).

ຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຕ້ອງເປັນພາສາລາວ ທີ່ສາມາດອ່ານ ແລະ ເຂົ້າໃຈເນື້ອໃນໄດ້ງ່າຍ, ໃນກໍລະນີຄຳຮ້ອງຂໍ ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກອົງການທະບຽນສານ.

**ມາດຕາ 22 ການພິຈາລະນາການຮ້ອງຂໍການຊົດເຊີຍຄ່າເສຍຫາຍ**

ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງກວດກາສຳນວນຄຳຮ້ອງດັ່ງກ່າວ ແລ້ວແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນວ່າ ຄຳຮ້ອງດັ່ງກ່າວຢູ່ໃນຄວາມຮັບຜິດຊອບໃນການຊົດເຊີຍຄ່າເສຍຫາຍຂອງຕົນ ຫຼື ບໍ່. ໃນກໍລະນີບໍ່ຢູ່ໃນຄວາມຮັບຜິດຊອບໃນການຊົດເຊີຍຄ່າເສຍຫາຍຂອງຕົນ ຕ້ອງແນະນຳໃຫ້ຜູ້ກ່ຽວ ຍື່ນຄຳຮ້ອງຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ.

**ມາດຕາ 23 ການກວດກາຢັ້ງຢືນຄວາມເສຍຫາຍ**

ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍການຊົດເຊີຍ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງກວດກາຢັ້ງຢືນຄວາມເສຍຫາຍຢ່າງລະອຽດ ເພື່ອເປັນພື້ນຖານໃນການກຳນົດມູນຄ່າການຊົດເຊີຍຄ່າເສຍຫາຍ. ໃນກໍລະນີມີຄວາມສັບສົນ ຫຼື ຕ້ອງກວດກາຢູ່ຫຼາຍສະຖານທີ່ ກຳນົດເວລາໃນການກວດກາ ອາດແກ່ຍາວ ແຕ່ບໍ່ໃຫ້ກາຍສີ່ສິບວັນ.

ອີງໃສ່ສະພາບ ແລະ ເນື້ອໃນຂອງບັນຫາ ອົງການຊົດເຊີຍຄ່າເສຍຫາຍ ອາດມີການຕີລາຄາຊັບສິນ, ພິຈາລະນາຄວາມເສຍຫາຍທາງດ້ານຊັບສິນ, ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຮັບເອົາຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂການຊົດເຊີຍ.

ຄ່າໃຊ້ຈ່າຍໃນການຕີລາຄາ ຫຼື ພິຈາລະນາດັ່ງກ່າວ ໃຫ້ນຳໃຊ້ງົບປະມານຂອງລັດ. ໃນກໍລະນີຜູ້ຖືກເສຍຫາຍຫາກບໍ່ພໍໃຈຜົນການຕີລາຄາ ແລະ ມີການຮ້ອງຂໍໃຫ້ຕີລາຄາ ຫຼື ພິຈາລະນາຄືນໃໝ່ ໂດຍການເຫັນດີຈາກອົງການຊົດເຊີຍຄ່າເສຍຫາຍ, ຄ່າໃຊ້ຈ່າຍໃນການຕີລາຄາ ຫຼື ພິຈາລະນາຄືນໃໝ່ນັ້ນ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຖືກເສຍຫາຍເອງ ເວັ້ນເສຍແຕ່ ຫາກໄດ້ພິສູດໃຫ້ເຫັນວ່າ ການຮ້ອງຂໍໃຫ້ຕີລາຄາ ຫຼື ພິຈາລະນາຄືນໃໝ່ນັ້ນ ມີເຫດຜົນ.

**ມາດຕາ 24 ການເຈລະຈາການຊົດເຊີຍຄ່າເສຍຫາຍ**

ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນສິ້ນສຸດການກວດກາຢັ້ງຢືນຄວາມເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງເຈລະຈາກັບຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ.

ຜູ້ເຂົ້າຮ່ວມໃນການເຈລະຈາ ປະກອບມີ ຜູ້ປະຕິບັດໜ້າທີ່ ທີ່ກໍ່ຄວາມເສຍຫາຍ, ຜູ້ຕາງໜ້າອົງການຊົດເຊີຍຄ່າເສຍຫາຍ ແລະ ຜູ້ຖືກເສຍຫາຍ ຫຼື ຜູ້ສືບທອດ ຫຼື ຜູ້ຕາງໜ້າ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ຖືກເສຍຫາຍ.

ສະຖານທີ່ເຈລະຈາ ແມ່ນບ່ອນຍື່ນຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຫຼື ຫ້ອງການບ້ານ ຫຼື ສຳນັກງານປົກຄອງຂັ້ນເມືອງ ບ່ອນທີ່ຜູ້ຖືກເສຍຫາຍອາໄສຢູ່ ເວັ້ນເສຍແຕ່ໄດ້ຕົກລົງກັນເປັນຢ່າງອື່ນ.

ການເຈລະຈາ ຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ ສາມ ສະບັບ ທີ່ມີເນື້ອໃນຄືກັນ, ມີລາຍເຊັນຂອງຜູ້ເຂົ້າຮ່ວມການເຈລະຈາ ແລະ ມອບໃຫ້ຜູ້ຮ້ອງຂໍທັນທີ ພາຍຫຼັງສິ້ນສຸດການເຈລະຈາ.

ຜົນຂອງການເຈລະຈາ ຈະນຳໃຊ້ເປັນພື້ນຖານໃນການຕົກລົງກ່ຽວກັບການຊົດເຊີຍຄ່າເສຍຫາຍ.

ບົດບັນທຶກການເຈລະຈາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ວັນ, ເດືອນ, ປີ ການເຈລະຈາ;
2. ສະຖານທີ່ ແລະ ຜູ້ເຂົ້າຮ່ວມໃນການເຈລະຈາ;
3. ຄຳເຫັນຂອງຜູ້ເຂົ້າຮ່ວມໃນການເຈລະຈາ;
4. ເນື້ອໃນເຈລະຈາ ທີ່ຕົກລົງກັນໄດ້ ຫຼື ບໍ່ສາມາດຕົກລົງກັນໄດ້.

### ມາດຕາ 25 ການຕົກລົງການຊົດເຊີຍຄ່າເສຍຫາຍ

ພາຍໃນກຳນົດເວລາ ສາມສິບ ວັນ ນັບແຕ່ວັນສິ້ນສຸດການເຈລະຈາກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງອອກຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ພ້ອມທັງຊົດເຊີຍຄ່າເສຍຫາຍ ໃຫ້ແກ່ຜູ້ຮ້ອງຂໍ.

ຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່, ນາມສະກຸນ ແລະ ທີ່ຢູ່ ຂອງຜູ້ຮ້ອງຂໍການຊົດເຊີຍ;
2. ເຫດຜົນກ່ຽວກັບການຮ້ອງຂໍການຊົດເຊີຍໂດຍຫຍໍ້;
3. ພື້ນຖານການກຳນົດຄວາມຮັບຜິດຊອບການຊົດເຊີຍ;
4. ມູນຄ່າການຊົດເຊີຍ;
5. ການຟື້ນຟູ (ຖ້າມີ);
6. ສິດໃນການຮ້ອງຟ້ອງ ຫຼື ຮ້ອງຂໍຕໍ່ສານປະຊາຊົນ ໃນກໍລະນີບໍ່ພໍໃຈຕໍ່ຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ;
7. ຜົນສັກສິດ.

### ມາດຕາ 26 ການລົບລ້າງ, ການປ່ຽນແປງ ແລະ ປັບປຸງການຕົກລົງການຊົດເຊີຍຄ່າເສຍຫາຍ

ອົງການທີ່ອອກຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຈະອອກຂໍ້ຕົກລົງລົບລ້າງການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ສອງ ວັນລັດຖະການ ໃນກໍລະນີຫາກມີຂໍ້ມູນ ໃດໜຶ່ງ ດັ່ງນີ້:

1. ບໍ່ມີຂໍ້ມູນຫຼັກຖານ ຫຼື ເອກະສານ ທີ່ເປັນບ່ອນອີງວ່າ ຄວາມເສຍຫາຍດັ່ງກ່າວ ຢູ່ໃນຄວາມຮັບຜິດຊອບການຊົດເຊີຍຄ່າເສຍຫາຍຂອງຕົນ;
2. ຂໍ້ມູນ, ຫຼັກຖານ ທີ່ຢັ້ງຢືນການຮ້ອງຂໍການຊົດເຊີຍ ທີ່ເປັນເທັດ.

ຜົນສະທ້ອນຂອງການລົບລ້າງ ຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້ ມີ ດັ່ງນີ້:

1. ໃນກໍລະນີບໍ່ໄດ້ຈ່າຍຄ່າຊົດເຊີຍໃຫ້ຜູ້ຖືກເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຈະອອກຂໍ້ຕົກລົງຍົກເລີກ ແລະ ຖອນເງິນທີ່ມີການຮ້ອງຂໍໃຫ້ຊົດເຊີຍລ່ວງໜ້າ (ຖ້າມີ);
2. ໃນກໍລະນີໄດ້ຈ່າຍຄ່າຊົດເຊີຍໃຫ້ຜູ້ຖືກເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ຕິດຕາມນຳເອົາເງິນທີ່ໄດ້ຈ່າຍໄປແລ້ວນັ້ນ ຄືນ;
3. ແກ້ໄຂຜົນສະທ້ອນອື່ນ (ຖ້າມີ) ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ອົງການທີ່ອອກຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຈະອອກຂໍ້ຕົກລົງ ປ່ຽນແປງ ຫຼື ປັບປຸງ ການຕົກລົງການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ສອງ ວັນລັດຖະການ ໃນກໍລະນີຫາກມີຂໍ້ມູນໃດໜຶ່ງ ດັ່ງນີ້:

1. ມີການສົມຮູ້ຮ່ວມຄິດ ລະຫວ່າງ ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ກັບ ຜູ້ມີສິດແກ້ໄຂການຊົດເຊີຍຄ່າເສຍຫາຍ ຫຼື ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການຮ້ອງຂໍການຊົດເຊີຍຄ່າເສຍຫາຍ;
2. ຜູ້ມີສິດແກ້ໄຂການຊົດເຊີຍຄ່າເສຍຫາຍ ບໍ່ປະຕິບັດຕາມເນື້ອໃນ ຫຼື ຂັ້ນຕອນ ການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ຂໍ້ຕົກລົງລົບລ້າງ, ປ່ຽນແປງ ຫຼື ປັບປຸງ ຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງແຈ້ງໃຫ້ຜູ້ ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ແລະ ອົງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 27 ການເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ

ອົງການຊົດເຊີຍຄ່າເສຍຫາຍ ຕົກລົງເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ສອງ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຍ້ອນຜູ້ຮ້ອງຂໍເຈັບໜັກ ໂດຍມີການ ຢັ້ງຢືນຈາກແພດ ຫຼື ມີເຫດຜົນອື່ນ ທີ່ຢັ້ງຢືນວ່າ ບໍ່ສາມາດເຂົ້າຮ່ວມໃນຂະບວນການແກ້ໄຂການຊົດເຊີຍຄ່າເສຍຫາຍໄດ້.

ກຳນົດເວລາໃນການເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງກຳນົດໄວ້ໃນຄຳຮ້ອງຂໍເລື່ອນການແກ້ໄຂການຊົດເຊີຍ ແຕ່ສູງສຸດບໍ່ໃຫ້ເກີນ ສາມສິບ ວັນ ເວັ້ນເສຍແຕ່ຜູ້ຮ້ອງຂໍ ເຈັບປ່ວຍຢ່າງໜັກ ແລະ ບໍ່ສາມາດເຂົ້າຮ່ວມໃນຂະບວນການແກ້ໄຂການຊົດເຊີຍຄ່າເສຍຫາຍໄດ້. ຜູ້ຮ້ອງຂໍ ສາມາດຮ້ອງຂໍຕໍ່ກຳນົດເວລາເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ໄດ້ອີກໜຶ່ງຄັ້ງ ກ່ອນວັນໝົດກຳນົດເວລາການເລື່ອນການແກ້ໄຂການຊົດເຊີຍ ຫ້າ ວັນລັດຖະການ.

ພາຍຫຼັງໝົດກຳນົດເວລາການເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງສືບ ຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍ.

ການຕົກລົງການເລື່ອນການແກ້ໄຂການຊົດເຊີຍ ຕ້ອງກຳນົດແຈ້ງ ເຫດຜົນ, ກຳນົດເວລາ, ສິດ ແລະ ພັນທະຂອງຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ແລະ ຜົນສະທ້ອນທາງດ້ານກົດໝາຍຂອງການເລື່ອນ ແລະ ແຈ້ງໃຫ້ຜູ້ຮ້ອງຂໍ ແລະ ອົງການທີ່ກ່ຽວຂ້ອງ ເປັນລາຍລັກອັກສອນ.

### ມາດຕາ 28 ການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ

ອົງການຊົດເຊີຍຄ່າເສຍຫາຍ ຕົກລົງໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ໜຶ່ງ ວັນລັດຖະການ ໃນກໍລະນີຫາກມີຂໍ້ມູນໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ປະຕິເສດວ່າ ບໍ່ໄດ້ຮັບໝາຍເຊີນໃຫ້ເຂົ້າຮ່ວມການເຈລະຈາການແກ້ໄຂການຊົດເຊີຍຄ່າເສຍຫາຍ ສອງຄັ້ງ;
2. ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ບໍ່ສາມາດເຂົ້າຮ່ວມການເຈລະຈາການຊົດເຊີຍຄ່າເສຍຫາຍໄດ້ຕາມໝາຍເຊີນ ໂດຍມີເຫດຜົນພຽງພໍ;
3. ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ບໍ່ເຊັນປົດບັນທຶກການເຈລະຈາການຊົດເຊີຍຄ່າເສຍຫາຍ;

4. ອົງການ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ ໄດ້ມີການພິຈາລະນາເອກະສານທີ່ເປັນບ່ອນອີງໃນການແກ້ໄຂການຊົດເຊີຍ.

ການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ມີກຳນົດເວລາ ສາມສິບວັນ ນັບແຕ່ວັນຕົກລົງໂຈະ ເປັນຕົ້ນໄປ. ຜູ້ຮ້ອງຂໍ ສາມາດຮ້ອງຂໍຕໍ່ກຳນົດເວລາໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ໄດ້ອີກໜຶ່ງຄັ້ງ ກ່ອນວັນໝົດກຳນົດເວລາການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ຫ້າ ວັນລັດຖະການ.

ພາຍຫຼັງໝົດກຳນົດເວລາການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງສືບ ຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍ.

ການຕົກລົງການໂຈະການແກ້ໄຂການຊົດເຊີຍ ຕ້ອງກຳນົດແຈ້ງ ເຫດຜົນ, ກຳນົດເວລາ, ສິດ ແລະ ພັນທະຂອງຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ແລະ ຜົນສະທ້ອນທາງດ້ານກົດໝາຍຂອງການໂຈະ ແລະ ແຈ້ງໃຫ້ຜູ້ຮ້ອງຂໍ ແລະ ອົງການທີ່ກ່ຽວຂ້ອງ ເປັນລາຍລັກອັກສອນ.

**ມາດຕາ 29 ການຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ**

ອົງການຊົດເຊີຍຄ່າເສຍຫາຍ ຕົກລົງຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ຫ້າວັນລັດຖະການ ໃນກໍລະນີຫາກມີຂໍ້ມູນໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍ ໄດ້ຖອນຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ກ່ອນທີ່ອົງການຊົດເຊີຍຄ່າເສຍຫາຍ ດຳເນີນການກວດກາຢັ້ງຢືນຄວາມເສຍຫາຍ;
2. ຜູ້ຖືກເສຍຫາຍ ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ, ການຈັດຕັ້ງທີ່ຖືກເສຍຫາຍ ໄດ້ສິ້ນສຸດການເຄື່ອນໄຫວ ໂດຍບໍ່ມີການຈັດຕັ້ງສືບຕໍ່ ສິດ ແລະ ພັນທະ;
3. ຜູ້ຮ້ອງຂໍ ມີການກະທຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3 ແລະ 4 ມາດຕາ 27 ຂອງກົດໝາຍສະບັບນີ້ ໂດຍບໍ່ມີເຫດຜົນ;
4. ມີຂໍ້ຕົກລົງລົບລ້າງຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ.

ຂໍ້ຕົກລົງຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງສົ່ງໃຫ້ຜູ້ຮ້ອງຂໍ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ອົງການຊົດເຊີຍຄ່າເສຍຫາຍ ທີ່ກ່ຽວຂ້ອງ.

ໃນກໍລະນີ ໄດ້ຈ່າຍຄ່າຊົດເຊີຍໃຫ້ຜູ້ຖືກເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ຕິດຕາມນຳເອົາເງິນທີ່ໄດ້ຈ່າຍໄປແລ້ວນັ້ນຄືນ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນຂໍ້ 2 ວັກທີໜຶ່ງ ຂອງມາດຕານີ້.

**ມາດຕາ 30 ການສະເໜີໃນກໍລະນີບໍ່ພໍໃຈຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍ**

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຫາກບໍ່ພໍໃຈຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍ ຂອງອົງການຊົດເຊີຍຄ່າເສຍຫາຍ ສາມາດສະເໜີຕໍ່ອົງການຂັ້ນເທິງຖັດໄປ ເພື່ອແກ້ໄຂ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຈາກອົງການຊົດເຊີຍຄ່າເສຍຫາຍ ເປັນຕົ້ນໄປ.

## ໝວດທີ 2
## ການແກ້ໄຂການຊົດເຊີຍຄ່າເສຍຫາຍ ຢູ່ສານປະຊາຊົນ

**ມາດຕາ 31 ການຮ້ອງຟ້ອງຕໍ່ສານ**

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຫາກບໍ່ພໍໃຈຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍ ຂອງອົງການຊົດເຊີຍຄ່າເສຍຫາຍ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໄດ້ຮັບຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ເປັນຕົ້ນໄປ.

**ມາດຕາ 32 ສານປະຊາຊົນທີ່ມີສິດພິຈາລະນາຕັດສິນກ່ຽວກັບການຊົດເຊີຍຄ່າເສຍຫາຍ**

ສານປະຊາຊົນຂັ້ນແຂວງ ເປັນຜູ້ມີສິດພິຈາລະນາຕັດສິນກ່ຽວກັບການຊົດເຊີຍຄ່າເສຍຫາຍ ເປັນຂັ້ນຕົ້ນ.

**ມາດຕາ 33 ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ**

ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນ ດັ່ງນີ້:

1. ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ທີ່ຢູ່ໃນຄວາມຮັບຜິດຊອບການຊົດເຊີຍຄ່າເສຍຫາຍຈາກລັດ;
2. ຄວາມເສຍຫາຍ, ມູນຄ່າການຊົດເຊີຍ ແລະ ການຟື້ນຟູ (ຖ້າມີ);
3. ອົງການຈ່າຍຄ່າຊົດເຊີຍ ແລະ ຟື້ນຟູ (ຖ້າມີ).

## ພາກທີ IV
## ງົບປະມານຊົດເຊີຍຄ່າເສຍຫາຍ

**ມາດຕາ 34 ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນການຊົດເຊີຍຄ່າເສຍຫາຍຈາກລັດ ແມ່ນງົບປະມານຂອງລັດ.

**ມາດຕາ 35 ການຂຶ້ນແຜນຄາດຄະເນງົບປະມານ**

ກະຊວງການເງິນ ຂຶ້ນແຜນຄາດຄະເນງົບປະມານຮັບໃຊ້ເຂົ້າໃນການຊົດເຊີຍຄ່າເສຍຫາຍ ບົນພື້ນຖານການສະເໜີຂອງອົງການຊົດເຊີຍຄ່າເສຍຫາຍ ເພື່ອສະເໜີຕໍ່ລັດຖະບານ ນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 36 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນການຊົດເຊີຍຄ່າເສຍຫາຍ ຕ້ອງເກັບຮັກສາໄວ້ໃນຄັງເງິນແຫ່ງຊາດ.

ການນຳໃຊ້ງົບປະມານເຂົ້າໃນການຊົດເຊີຍຄ່າເສຍຫາຍ ໃຫ້ແກ່ຜູ້ຖືກເສຍຫາຍ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

# ພາກທີ V
# ການຊຳລະເງິນຄືນ

**ມາດຕາ 37 ພັນທະໃນການຊຳລະເງິນຄືນ**

ຜູ້ປະຕິບັດໜ້າທີ່ ທີ່ກໍ່ຄວາມເສຍຫາຍ ມີພັນທະຊຳລະເງິນຄືນເຂົ້າຄັງເງິນແຫ່ງຊາດ ຕາມຈຳນວນທີ່ໄດ້ຈ່າຍໃຫ້ຜູ້ຖືກເສຍຫາຍ ລວມທັງຄ່າໃຊ້ຈ່າຍອື່ນ ທີ່ນຳໃຊ້ເຂົ້າໃນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຂອງອົງການຊົດເຊີຍຄ່າເສຍຫາຍ ທີ່ກ່ຽວຂ້ອງ.

ນອກຈາກການຊຳລະເງິນຄືນ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ຜູ້ປະຕິບັດໜ້າທີ່ ອາດຖືກລົງວິໄນ ຫຼື ດຳເນີນຄະດີອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 ພື້ນຖານການກຳນົດມູນຄ່າການຊຳລະເງິນຄືນ**

ການກຳນົດມູນຄ່າການຊຳລະເງິນຄືນ ໃຫ້ອີງໃສ່ພື້ນຖານ ດັ່ງນີ້:

1. ລະດັບການກະທຳຜິດ;
2. ຈຳນວນເງິນທີ່ລັດໄດ້ຊົດເຊີຍ.

ຜູ້ປະຕິບັດໜ້າທີ່ຄົນດຽວ ສ້າງຄວາມເສຍຫາຍ ໃຫ້ປະຕິບັດ ດັ່ງນີ້:

1. ກະທຳຜິດໂດຍເຈດຕະນາ ໂດຍມີຄຳຕັດສີນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຕ້ອງໄດ້ຊຳລະເງິນຄືນທັງໝົດໃຫ້ລັດ ຕາມຈຳນວນເງິນທີ່ລັດໄດ້ຊົດເຊີຍ;
2. ກະທຳຜິດໂດຍເຈດຕະນາ ແຕ່ບໍ່ເຖິງຂັ້ນຖືກດຳເນີນຄະດີທາງອາຍາ ຈຳນວນເງິນທີ່ຕ້ອງຊຳລະເງິນຄືນໃຫ້ລັດແມ່ນ ສາມສິບ ຫາ ຫ້າສິບ ເດືອນ ຂອງເງິນເດືອນຜູ້ປະຕິບັດໜ້າທີ່ ແຕ່ຈຳນວນເງິນທັງໝົດ ບໍ່ເກີນ ຫ້າສິບສ່ວນຮ້ອຍ (50%) ຂອງ ຈຳນວນເງິນທີ່ລັດໄດ້ຊົດເຊີຍ;
3. ກະທຳຜິດໂດຍບໍ່ເຈດຕະນາ ຈຳນວນເງິນທີ່ຕ້ອງຊຳລະເງິນຄືນໃຫ້ລັດ ແມ່ນ ສາມ ຫາ ຫ້າເດືອນ ຂອງເງິນເດືອນຜູ້ປະຕິບັດໜ້າທີ່ ແຕ່ຈຳນວນເງິນທັງໝົດ ບໍ່ເກີນ ຫ້າສິບສ່ວນຮ້ອຍ (50%) ຂອງຈຳນວນເງິນທີ່ລັດໄດ້ຊົດເຊີຍ;
4. ໃນກໍລະນີ ຈຳນວນເງິນ ຫ້າສິບສ່ວນຮ້ອຍ (50%) ທີ່ລັດໄດ້ຊົດເຊີຍ ຕໍ່າກວ່າ ສາມສິບເດືອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຫຼື ຕໍ່າກວ່າ ສາມເດືອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຂອງມາດຕານີ້ ຈຳນວນເງິນທີ່ຜູ້ປະຕິບັດໜ້າ ທີ່ຕ້ອງຈ່າຍຄືນ ຫ້າສິບສ່ວນຮ້ອຍ (50%) ຂອງຈຳນວນເງິນທີ່ລັດໄດ້ຊົດເຊີຍ.

ຜູ້ປະຕິບັດໜ້າທີ່ຫຼາຍຄົນ ສ້າງຄວາມເສຍຫາຍ ການຊຳລະເງິນຄືນຂອງແຕ່ລະຄົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນວັກທີ ສອງ ຂອງມາດຕານີ້.

ຜູ້ປະຕິບັດໜ້າທີ່ ສາມາດຫຼຸດຜ່ອນການຊຳລະເງິນຄືນ ຖ້າຄົບເງື່ອນໄຂ ດັ່ງນີ້:

1. ແກ້ໄຂຜົນເສຍຫາຍທີ່ເກີດຂຶ້ນດ້ວຍຕົນເອງ;
2. ປະຕິບັດພັນທະໃນຂະບວນການການແກ້ໄຂການຊົດເຊີຍຄ່າເສຍຫາຍ ຢ່າງຄົບຖ້ວນ ແລະ ໄດ້ຊຳລະເງິນຄືນໃຫ້ລັດ ຢ່າງໜ້ອຍ ຫ້າສິບສ່ວນຮ້ອຍ (50%) ຂອງຈຳນວນເງິນທີ່ຕ້ອງຊຳລະຄືນ;

3. ມີຄວາມຫຍຸ້ງຍາກດ້ານເສດຖະກິດ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.

ອົງການຊົດເຊີຍຄ່າເສຍຫາຍ ພິຈາລະນາຫຼຸດຜ່ອນ ການຊໍາລະເງິນຄືນ ແຕ່ສູງສຸດ ບໍ່ເກີນ ສາມສິບສ່ວນຮ້ອຍ (30%) ຂອງຈໍານວນເງິນທັງໝົດທີ່ຕ້ອງຊໍາລະຄືນ.

**ມາດຕາ 39 ການຕົກລົງກ່ຽວກັບການຊໍາລະເງິນຄືນ**

ອົງການຊົດເຊີຍຄ່າເສຍຫາຍ ມີສິດຕົກລົງກ່ຽວກັບການຊໍາລະເງິນຄືນ.

ການຊໍາລະເງິນຄືນ ອາດຈ່າຍເທື່ອດຽວ, ເປັນງວດ ຫຼື ເປັນເດືອນ ຕາມແຕ່ກໍລະນີ. ຈໍານວນເງິນດັ່ງກ່າວ ຕ້ອງມອບເຂົ້າຄັງເງິນແຫ່ງຊາດ ຢ່າງຄົບຖ້ວນ ແລະ ທັນກໍານົດເວລາ.

ໃນກໍລະນີ ຜູ້ປະຕິບັດໜ້າທີ່ ເສຍຊີວິດ ການຊໍາລະເງິນຄືນໃຫ້ຢຸດ ນັບແຕ່ວັນຜູ້ປະຕິບັດໜ້າທີ່ ເສຍຊີວິດເປັນຕົ້ນໄປ.

ໃນກໍລະນີ ຜູ້ປະຕິບັດໜ້າທີ່ ຮັບອຸດໜູນບໍານານ ອົງການປະກັນສັງຄົມ ທີ່ໄດ້ຈ່າຍເງິນຊົດເຊີຍແທນຜູ້ປະຕິບັດໜ້າທີ່ນັ້ນ ຕ້ອງເກັບເງິນນໍາຜູ້ກ່ຽວຄືນ ໃຫ້ຄົບຕາມຈໍານວນ.

ໃນກໍລະນີ ຜູ້ປະຕິບັດໜ້າທີ່ ຮັບບໍາເນັດ, ຖືກລົງວິໄນໄລ່ອອກການ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ໃນການເກັບເງິນຊົດເຊີຍນໍາຜູ້ກ່ຽວຄືນ ໃຫ້ຄົບຕາມຈໍານວນ.

**ມາດຕາ 40 ການສະເໜີ ຫຼື ຮ້ອງຟ້ອງຕໍ່ສານ ກ່ຽວກັບການຕົກລົງການຊໍາລະເງິນຄືນ**

ຜູ້ປະຕິບັດໜ້າທີ່ ທີ່ມີພັນທະຊໍາລະເງິນຄືນນັ້ນ ຫາກບໍ່ພໍໃຈກັບການຕົກລົງກ່ຽວກັບການຊໍາລະເງິນຄືນ ມີສິດສະເໜີໃຫ້ອົງການຈັດຕັ້ງຂັ້ນເທິງຖັດນັ້ນ ເພື່ອແກ້ໄຂ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 41 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ປອມແປງເອກະສານ ຫຼື ສະໜອງຂໍ້ມູນ, ຫຼັກຖານ ກ່ຽວກັບການຊົດເຊີຍຄ່າເສຍຫາຍ ທີ່ບໍ່ຖືກຕ້ອງ;
2. ສົມຮູ້ຮ່ວມຄິດກັບພະນັກງານ ຫຼື ເຈົ້າໜ້າທີ່ ທີ່ຮັບຜິດຊອບການແກ້ໄຂການຊົດເຊີຍຄ່າເສຍຫາຍ ເພື່ອເອົາຄ່າເສຍຫາຍຈາກລັດ;
3. ແຊກແຊງ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບການແກ້ໄຂການຊົດເຊີຍຄ່າເສຍຫາຍ;
4. ປົກປິດ, ເຊື່ອງອໍາ ຫຼື ທໍາລາຍ ຂໍ້ມູນ, ຫຼັກຖານ ກ່ຽວກັບຄວາມເສຍຫາຍ;
5. ນາບຂູ່ ຫຼື ທໍາຮ້າຍ ພະນັກງານ ແລະ ເຈົ້າໜ້າທີ່, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບການຊົດເຊີຍຄ່າເສຍຫາຍ;
6. ປົກປ້ອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ລະເມີດກົດໝາຍ;

7. ໃຫ້ສິນບົນ ພະນັກງານ ແລະ ເຈົ້າໜ້າທີ່;
8. ໝິ່ນປະໝາດ, ໃສ່ຮ້າຍພະນັກງານ ແລະ ເຈົ້າໜ້າທີ່;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 42 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບຜູ້ຖືກເສຍຫາຍ ເພື່ອເອົາຄ່າເສຍຫາຍຈາກລັດ;
2. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອແຊກແຊງການແກ້ໄຂການຊົດເຊີຍຄ່າເສຍຫາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
3. ແກ້ໄຂການຊົດເຊີຍຄ່າເສຍຫາຍ ທີ່ຂັດກັບກົດໝາຍ;
4. ປະຕິບັດສິດ, ໜ້າທີ່ ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ບັງຄັບ ແລະ ນາບຂູ່ ຜູ້ຖືກເສຍຫາຍ;
6. ເມີນເສີຍຕໍ່ໜ້າທີ່, ບິດເບືອນ, ປິດບັງຄວາມຈິງ, ຊຸກເຊື່ອງ ຫຼື ທຳລາຍ ເອກະສານ ແລະ ຫຼັກຖານ ກ່ຽວກັບຄວາມເສຍຫາຍທີ່ຕົນກໍ່ຂຶ້ນ;
7. ກົດໜ່ວງ, ຖ່ວງດຶງເອກະສານຮ້ອງຂໍການຊົດເຊີຍ;
8. ທວງ, ຮຽກ, ຮັບ, ເອົາສິນບົນ ຈາກຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຫຼື ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;
9. ເປີດເຜີຍຄວາມລັບທາງລັດຖະການ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການກວດກາວຽກງານຊົດເຊີຍຄ່າເສຍຫາຍ

**ມາດຕາ 43 ອົງການກວດກາວຽກງານຊົດເຊີຍຄ່າເສຍຫາຍ**

ອົງການກວດກາວຽກງານຊົດເຊີຍຄ່າເສຍຫາຍ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 44 ເນື້ອໃນການກວດກາ**

ການກວດກາ ວຽກງານຊົດເຊີຍຄ່າເສຍຫາຍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊົດເຊີຍຄ່າເສຍຫາຍ;
2. ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ກ່ຽວກັບວຽກງານຊົດເຊີຍຄ່າເສຍຫາຍ.

**ມາດຕາ 45 ຮູບການການກວດກາ**

ການກວດກາວຽກງານຊົດເຊີຍຄ່າເສຍຫາຍ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

# ພາກທີ VIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 46 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 47 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 49 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**